ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານປະທານປະເທດ<br>
ກົມບໍລິຫານ ແລະ ການເງິນ

ເລກທີ 024 /ບກ

ນະຄອນຫລວງວຽງຈັນ, ວັນທີ 23 ມັງກອນ 2026

# ໜັງສືແຈ້ງເຊີນປະມູນ

1. ກົມບໍລິຫານ ແລະ ການເງິນ ຫ້ອງວ່າການສຳນັກງານປະທານປະເທດ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນວຸດທິທີ່ເໝາະສົມ ເຂົ້າຍື່ນຊອງປະມູນ ສຳລັບການຕົບແຕ່ງ ແລະ ຈັດສະຖານທີ່ ເພື່ອກະກຽມຕ້ອນຮັບແຂກຂັ້ນສູງ ຢູ່ ທຳນຽບປະທານປະເທດ (ຫໍຄຳ). ໄລຍະເວລາໃຫ້ສຳເລັດພາຍໃນ 03 ວັນ;
2. ການປະມູນຈະດຳເນີນຕາມຂັ້ນຕອນ ການປະມູນແບບເປີດກວ້າງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດ ທີ່ມີຄຸນວຸດທິເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດ ຖືກຕ້ອງຕາມກົດໝາຍ ທີ່ກ່ຽວພັນກັບວຽກງານດັ່ງກ່າວ;
4. ບໍລິສັດ ທີ່ມີຄຸນວຸດທິເໝາະສົມ ສົນໃຈສາມາດພົວພັນ ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ກົມບໍລິຫານ ແລະ ການເງິນ ຫ້ອງວ່າການສຳນັກງານປະທານປະເທດ ຫ້ອງ (ຂາອອກ-ຂາເຂົ້າ) ໂທ: 021 216031, 020 22345 313 ນັບແຕ່ເວລາ 08:30-16:00 ໂມງ (ໃນໂມງລັດຖະການ).
5. ບໍລິສັດໃດ ທີ່ຕ້ອງການຊື້ເອກະສານປະມູນຄົບຊຸດ ສາມາດເຂົ້າມາຊື້ຊອງປະມູນ, ເລີ່ມແຕ່ວັນທີ 26 ມັງກອນ ຫາ ວັນທີ 02 ກຸມພາ 2026, ໃນລາຄາ 3,000,000 ກີບ, ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ວິທີການຊຳລະຕ້ອງຈ່າຍເປັນ ເງິນສົດ ( ບໍ່ຮັບເງິນໂອນ );
6. ຊອງປະມູນຕ້ອງສົ່ງໃນວັນທີ 02 ກຸມພາ 2026 ກ່ອນເວລາ 10:00 ໂມງເຊົ້າ ທີ່ກົມບໍລິຫານ ແລະ ການເງິນ ຫ້ອງວ່າການສຳນັກງານປະທານປະເທດ ຫ້ອງ (ຂາອອກ-ຂາເຂົ້າ) ຊອງປະມູນໃດທີ່ສົ່ງຊ້າກ່ວາເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ; ຊອງປະມູນທຸກໆຊອງຈະໄດ້ເປີດພ້ອມກັນໃນເວລາ 10:00 ໂມງເຊົ້າ ຂອງວັນທີ 02 ກຸມພາ 2026 ຢູ່ທີ່ ຫ້ອງປະຊຸມນ້ອຍຊັ້ນ I ຫ້ອງວ່າການສຳນັກງານປະທານປະເທດ ໂດຍຊ່ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມ.

**ຫົວໜ້າກົມບໍລິຫານ ແລະ ການເງິນ**

ນ. ໂອນິດາ ວົນາວົງ